**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ຂໍ້ແນະນຳ

# ເຕັກນິກການປູກໝາກເຜັດຊີ້ຟ້າ



ເອກະສານ ປະກອບການຝຶກອົບຮົມ 16:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເໜີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງໝາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຢອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 16 :
# ແນະນໍາເຕັກນິກການປູກໝາກເຜັດຊີ້ຟ້າ

## ສາລະບານ

ໝາກເຜັດຊີ້ຟ້າ (Long cayenne pepper)....................................2
ລັກສະນະທົ່ວໄປ ........................................................................... 2
ພັນທີ່ໃຊ້ປູກ ...............................................................................3
ການກຽມດິນ.................................................................................3
ການປູກ .......................................................................................4
ການບົວລະບັດຮັກສາ ...................................................................5
ການເກັບກ່ຽວ ...............................................................................6

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003



ມື້/ເທື່ອ ຂຶ້ນກັບສະພາບຄວາມຊຸ່ມຊື່ນຂອງດິນຢ່າໃຫ້ນ້ຳຫຼາຍ ຫຼືແຫ້ງເກີນໄປເພາະຈະເຮັດໃຫ້ຕົ້ນໝາກເຜັດຢຸດສະງັກການຈະເລີນເຕີບໂຕ.

## ການພວນດິນແລະກຳຈັດຫຍ້າ

ຄວນພວນດິນ ແລະກຳຈັດຫຍ້າຫຼັງຈາກຕົ້ນໝາກເຜັດຕັ້ງຕົວໄດ້. ເພາະມັນຈະຊ່ວຍເຮັດໃຫ້ດິນມີການລະບາຍນ້ຳ ແລະອາກາດໄດ້ດີຂື້ນບໍ່ໃຫ້ຫຍ້າຍາດແຍ່ງນ້ຳ ແລະອາຫານຈາກພືດປູກຂອງເຮົາ. ແຕ່ການປະຕິບັດຕ່າງໆ ຕ້ອງລະມັດລະວັງຢ່າໃຫ້ກະທົບກະເທືອນ ຮາກຂອງໝາກເຜັດ.

## ການເກັບກ່ຽວ

ອາຍຸການເກັບກ່ຽວເທື່ອທຳອິດຂອງໝາກເຜັດຊີ້ຟ້າ ປະມານ 70 ຫາ 95 ມື້ຂື້ນໄປຫຼັງຈາກຍ້າຍປູກ. ຜົນຜະລິດໃນໄລຍະທຳອິດຈະໜ້ອຍ ແຕ່ຈະເພີ່ມຂື້ນເລື້ອຍໆ ແລະຈະລຸດລົງອີກເທື່ອນຶ່ງເມື່ອຕົ້ນເລີ້ມແກ່. ການເກັບຄວນເກັບທຸກໆ 7 ວັນ, ໃຊ້ວິທີເດັດເອົາເທື່ອລະໝາກ ໂດຍໃຊ້ເລັບມື້ເດັດເອົາບ່ອນຮອຍກ້ານໝາກຕໍ່ກັບກິ່ງ. ໝາກເຜັດຈະໃຫ້ຜົນຜະລິດເຖິງ 6 ຫາ 7 ເດືອນ ຫຼືອາດຈະເປັນປີ ຈົນກວ່າຕົ້ນຈະຫ່ຽວແຫ້ງຕາຍໄປ.

ຄວນມີດິນຕິດຮາກມາພ້ອມ ແລະເຮັດຢ່າງລະມັດລະວັງ. ຕົ້ນເບ້ຍທີ່ຍ້າຍອອກມາຈາກໜານກ້າຕ້ອງຮີບປູກທັນທີການປູກຄວນບີບດິນອ້ອມໆ ລໍາຕົ້ນໃຫ້ແໜ້ນ ແລະລະວັງຢ່າເຮັດໃຫ້ຮາກຂາດເພາະຈະເຮັດໃຫ້ຕົ້ນລົ້ມໄດ້ງ່າຍ, ເພາະຕົ້ນໝາກເຜັດມີຮາກແຜ່ກະຈາຍຢູ່ໃກ້ໆໜ້າດິນ. ຫຼັງຈາກປູກແລ້ວຕ້ອງຫົດນໍ້າໃຫ້ຊຸ່ມໃຊ້ເຟືອງ ຫຼືຫຍ້າແຫ້ງປົກຄຸມດິນ ແລະຄວນເຮັດເປັນຮ້ານບັງແດດຢ່າໃຫ້ຕົນເບ້ຍຖືກແດດກ້າ ໃນໄລຍະເລີ່ມຍ້າຍປູກໃໝ່ໆ ເພາະຈະເຮັດໃຫ້ເບ້ຍໃຫຍ່ຊ້າ ຫຼືແຫ້ງຕາຍໄດ້.

## ການບົວລະບັດຮັກສາ

### ການໃສ່ຝຸ່ນ

ຝຸ່ນທີ່ໃຊ້ແມ່ນຝຸ່ນເຄມີ ສູດ 15_15_15 ຫຼື 13_13_21 ຫຼື ສູດອື່ນໆທີ່ໃກ້ຄຽງກັນ ໂດຍໃສ່ໃນຈໍານວນ 300 ຫາ 500 ກິໂລ/ຮຕ ຂື້ນຢູ່ກັບຄວາມອຸດົມສົມບູນຂອງດິນ. ການໃສ່ແບ່ງອອກເປັນສອງເທື່ອ: ເທື່ອທີ່1: ໃສ່ເຄິ່ງນຶ່ງ ເພື່ອເປັນຝຸ່ນຮອງພື້ນຕອນຕຽມດິນ (ຮອງກົ້ນຂຸມປູກ). ເທື່ອທີ່ 2: ໃສ່ເມື່ອອາຍຸໄດ້ 20 ຫາ 30 ມື້ ຫຼັງຈາກຍ້າຍໄປປູກ. ໂດຍໃສ່ແບບໂຮຍຂ້າງຕົ້ນ ແລະ ພວນດິນປົກ.

### ການໃຫ້ນໍ້າ

ຄວນໃຫ້ນໍ້າຢ່າງພຽງພໍ ແລະ ສະໝໍ່າສະເໝີ ຢ່າໃຫ້ປຽກຫຼາຍຈົນເກີນໄປ. ການໃຫ້ນໍ້າຄວນໃຫ້ທຸກໆ ວັນຫຼັງປູກຈົນເຖິງຕົ້ນເບ້ຍຕັ້ງຕົວໄດ້ 5 ຫາ 6 ທິດ. ຫຼັງຈາກນີ້ແລ້ວ ຈຶ່ງຄ່ອຍໆ ລົດການໃຫ້ນໍ້າລົງ ຊຶ່ງອາດຈະຫົດ 3



# ຂໍ້ແນະນໍາເຕັກນິກການປູກໝາກເຜັດຊີ້ຟ້າ



## ໝາກເຜັດຊີ້ຟ້າ (Long cayenne pepper)

ໝາກເຜັດຊີ້ຟ້າ ເປັນພືດຜັກກິນໝາກທີ່ເຮົາໃຊ້ບໍລິໂພກພາກສ່ວນໝາກ. ໃຊ້ປະກອບອາຫານ ໂດຍກົງ ແລະນໍາປຸງແຕ່ງເປັນອາຫານອື່ນໆໄດ້ອີກ. ໝາກເຜັດຊີ້ຟ້າມີຖິ່ນກໍາເນີດ ໃນທະວີບອາເມລິກາໃຕ້, ເປັນພືດທີ່ມີອາຍຸຍາວລົດຊາດເຜັດ, ເວລາອ່ອນຈະເປັນສີຂຽວ ແຕ່ເມື່ອເວລາແກ່ແລ້ວຈະຄ່ອຍໆ ປ່ຽນເປັນສີແດງ.

## ລັກສະນະທົ່ວໄປ

ໝາກເຜັດຊີ້ຟ້າເປັນພືດໃນຕະກຸນ Solanaceae ມີຊື່ວິທະຍາສາດວ່າ Capsium annuum L. var. acuminatum. ໝາກເຜັດຊີ້ຟ້າ ສາມາດປູກໄດ້ໃນດິນເກືອບທຸກຊະນິດ ແຕ່ດິນທີ່ເໝາະສົມທີ່ສຸດແມ່ນດິນລ້ວນປົນຊາຍທີ່ສາມາດລະບາຍນໍ້າດີ, ມີອິນຊີວັດຖຸຫຼາຍປະຕິກິລິຍາຂອງດິນ (pH)

6.0 ຫາ 6.8 ຫຼື ເປັນກົດເລັກນ້ອຍ. ດິນທີ່ປູກໝາກເຜັດຕ້ອງບໍ່ມີນ້ຳແຊ່ ຫຼື ແຫ້ງເກີນໄປ ສາມາດປູກໄດ້ຕະຫຼອດປີ ໃນປະເທດເຮົາ. ແຕ່ບໍ່ມັກອາກາດຮ້ອນຫຼາຍ ຫຼືຝົນຕົກຫຼາຍເກີນໄປ ເພາະຈະເຮັດໃຫ້ຕົ້ນເປັນໝາກໜ້ອຍ ແລະ ມີພະຍາດແມງໄມ້ລົບກວນ. ເຜັດຊີ້ຟ້າ ມີອາຍຸແຕ່ຍ້າຍກ້າຈົນໄປເຖິງການເກັບກ່ຽວເທື່ອທຳອິດໃຊ້ເວລາປະມານ 70 ຫາ 95 ມື້.

## ພັນທີ່ໃຊ້ປູກ

ໝາກເຜັດຊີ້ຟ້າ ໃຊ້ປູກສ່ວນຫຼາຍເປັນພັນພື້ນເມືອງທີ່ປູກມາດົນນານແລ້ວ ແລະ ກໍມີພັນມາຈາກຕ່າງປະເທດຈຳນວນນຶ່ງເຊັ່ນ: ພັນ *Cay enne Longslim*, ພັນ *Passion Hybrid* ເປັນຕົ້ນ.

## ການຕຽມດິນ

### ການຕຽມໜານກ້າ

ຂຸດດິນເລິກປະມານ 15 ຫາ 20 ຊຕມ. ຕາກດິນໃຫ້ແຫ້ງ 5 ຫາ 7 ມື້ ໃສ່ຝຸ່ນຄອກ ຫຼືຝຸ່ນບົ່ມໃຫ້ຫຼາຍປະສົມກັບດິນໃຫ້ສະໝ່ຳສະເໝີແລ້ວເຮັດເປັນໜານ.

### ການຕຽມໜານປູກ

ຂຸດຫຼືໄຖດິນໃຫ້ເລິກ 25 ຫາ 30 ຊຕມ. ຕາກດິນໄວ້ 7 ຫາ 10 ມື້ ໃສ່ຝຸ່ນຄອກ ຫຼືຝຸ່ນບົ່ມ ທີ່ລະລາຍຕົວດີແລ້ວ ໃນຈຳນວນ 12 ຫາ 17 ໂຕນ/ຮຕ.





ຖ້າດິນເປັນກົດສູງຄວນໃສ່ປູນຂາວຊ່ວຍໃນຈຳນວນ 12.000 ຫາ 13.000 ກິໂລ/ຮຕ ເພື່ອຊ່ວຍລຸດຜ່ອນຄວາມເປັນກົດຂອງດິນ. ຈາກນັ້ນກໍຄືນປະສົມກັບດິນໃຫ້ສະໝ່ຳສະເໝີ ແລະຍ່ອງດິນໃຫ້ມີຂະໜາດນ້ອຍ. ຫຼັງຈາກໃສ່ປູນຂາວແລ້ວ 15 ຫາ 20 ມື້ ຈຶ່ງປູກໄດ້.

### ການກ້າເບ້ຍ

ຫຼັງຈາກຕຽມໜານກ້າແລ້ວ ໃຫ້ຫວ່ານເມັດພັນໝາກເຜັດໃຫ້ກະຈາຍທົ່ວໜານ ຫຼືອາດຈະໂຮຍເປັນແຖວແຕ່ລະແຖວຫ່າງກັນ 15 ຊຕມ. ເຮັດເປັນຮ່ອງ ເລິກປະມານ 1 ຊຕມ. ໂຮຍເມັດ ພັນລົງໃນຮ່ອງແລ້ວຫວ່ານປົກດ້ວຍຝຸ່ນຄອກ, ຝຸ່ນບົ່ມ ຫຼື ດິນທີ່ລະອຽດກໍໄດ້ໃຫ້ໜາປະມານ 0.5 ຫາ 1.0 ຊຕມ. ຫົດນ້ຳໃຫ້ຊຸ່ມ ແລະ ປົກ ດ້ວຍເຟືອງ ຫຼື ຫຍ້າແຫ້ງບາງໆ. ຫຼັງຈາກເບ້ຍງອກໄດ້ 15 ຫາ 20 ມື້ ໃຫ້ຖອນແຍກເອົາຕົ້ນທີ່ບໍ່ສົມບູນ ຫຼື ຕົ້ນອ່ອນແອອອກ. ພ້ອມກັນນີ້ກໍພະຍາຍາມຈັດໄລຍະຫ່າງຂອງເບ້ຍໃຫ້ຫ່າງກັນປະມານ 10 ຊຕມ.

## ການປູກໝາກເຜັດຊີ້ຟ້າ

ໄລຍະປູກທີ່ເໝາະສົມສຳລັບໝາກເຜັດຊີ້ຟ້າ ຊຶ່ງມີຊົງພຸ່ມໃຫຍ່ຄວນໃຊ້ໄລຍະຫ່າງລະຫວ່າງຕົ້ນຕໍ່ຕົ້ນ 50 ຊຕມ, ລະຫວ່າງແຖວຕໍ່ແຖວ 100 ຊຕມ. ຫຼັງຈາກຕຽມດິນປູກແລ້ວ ແລະເບ້ຍໃຫຍ່ໄດ້ຂະໜາດດີແລ້ວກໍສາມາດປູກໄດ້ເລີຍ. ເບ້ຍທີ່ຍ້າຍເອົາມາປູກ ຄວນເປັນເບ້ຍທີ່ແຂງແຮງມີອາຍຸປະມານ 30 ຫາ 40 ມື້, ສູງປະມານ 10 ຫາ 15 ຊຕມ. ການຍ້າຍເບ້ຍ